**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ

ກົມຊັບສິນທາງປັນຍາ

ເລກທີ 057 /ກວຕ.ກຊປ

ນະຄອນຫຼວງວຽງຈັນ, ວັນທີ 29 JAN 2016

# ແຈ້ງການ

**ເຖິງ:** ບໍລິສັດຕົວແທນການຍື່ນຄໍາຮ້ອງຂໍຈົດທະບຽນຊັບສິນທາງປັນຍາ.

**ເລື່ອງ:** ການຍື່ນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າສໍາລັບຫຼາຍໝວດ ຂອງສິນຄ້າ ຫຼື ການບໍລິການ.

- ອີງຕາມ ກົດໝາຍ ວ່າດ້ວຍ ຊັບສິນທາງປັນຍາ (ສະບັບປັບປຸງ) ສະບັບເລກທີ 01/ສພຊ, ລົງວັນທີ 20 ທັນວາ 2011;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມຊັບສິນທາງປັນຍາ ສະບັບເລກທີ 0641/ກວຕ, ລົງວັນທີ 13 ສິງ ຫາ 2015.

ກົມຊັບສິນທາງປັນຍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ເພື່ອປະຕິບັດຕາມມາດຕາ 33 ຫຍໍ້ໜ້າສອງ ຂອງກົດໝາຍ ວ່າດ້ວຍ ຊັບສິນທາງປັນຍາ (ສະບັບປັບປຸງ) ກ່ຽວກັບສໍານວນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ, ຊຶ່ງຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າໜຶ່ງສະບັບແມ່ນໃຊ້ໄດ້ສະເພາະເຄື່ອງໝາຍການຄ້າອັນດຽວ ແຕ່ສາມາດຍື່ນຂໍຈົດທະບຽນ ໄດ້ຫຼາຍໝວດຂອງສິນຄ້າ ຫຼື ການບໍລິການ. ສະນັ້ນ, ກົມຊັບສິນທາງປັນຍາ ຈະເລີ່ມຮັບຄໍາຮ້ອງຂໍການຈົດທະບຽນເຄື່ອງໝາຍການຄ້າສໍາລັບຫຼາຍໝວດຂອງສິນຄ້າ ຫຼື ການບໍລິການ ຕາມການຈັດໝວດຂອງສາກົນ ບົນເງື່ອນໄຂການຊໍາລະຄ່າທໍານຽມ ໃນແຕ່ລະໝວດຂອງສິນຄ້າ ຫຼື ການບໍລິການ ນັບແຕ່ວັນທີ **01 ກຸມພາ 2016** ເປັນຕົ້ນໄປ.

ສ່ວນຄ່າທໍານຽມແມ່ນຈະໄດ້ເກັບເພີ່ມຕາມໝວດຂອງສິນຄ້າ ຫຼື ການບໍລິການ, ໜຶ່ງໝວດແມ່ນ 800.000 ກີບ (ແປດແສນກີບ), ສ່ວນຄ່າບໍລິການແມ່ນຍັງຄືເກົ່າ ໜຶ່ງຄໍາຮ້ອງແມ່ນ 320.000 ກີບ (ສາມແສນຊາວພັນກີບ)

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ.

ຫົວໜ້າກົມຊັບສິນທາງປັນຍາ

ກະຊວງວິທະຍາສາດແລະເຕັກໂນໂລຊີ ກົມຊັບສິນທາງປັນຍາ

ດຣ. ຂັນລາສີ ແກ້ວບຸນພັນ

**LAO PEOPLE'S DEMOCRATIC REPUBLIC**
**Peace - Independence - Democracy - Unity - Prosperity**

**Ministry of Science and Technology**
Department of Intellectual Property

No.057/MOST-DIP
Vientiane Capital, 29 January 2016

# NOTICE

To: Authorized Intellectual Property Representative
Subject: Apply for multi-class application for registration of a trademark in Laos

- Pursuant to the revised Law on Intellectual Property No. 01/NA, dated 20 December 2011.
- Pursuant to the Decision of Minister of Ministry of Science and Technology on organization of Intellectual Property activities No.0641/MOST-DIP, dated 13 August 2015

Department of Intellectual Property has the honor to notice that: According to revised Article 33 of the Law on Intellectual Property concerning Application for registration of exclusive trademark in Laos, one registration application is valid for only one trademark but may apply to more than one class of goods or services as per the International Classification .

The Department of Intellectual Property shall request to the payment of a fee for each class of goods or services for registration of multi-class application of one trademark according to the International Classification. This notice shall come into force from 01 February 2016.

The fee will apply each class of goods or services, fee for one class is 800,000 Lao Kip, the service fee of Laos DIP remains unchanged with 320,000 Lao Kip (one application)

Therefore, Department of Intellectual Property notifies to IP representatives for implementation.

Director of Department of Intellectual Property
(Signed and sealed)

Dr. Khanlasy KEOBOUNPHANH